

# ເອກະລັກຂອງຊົນເຜົ່າ

# ລະວີ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປື້ມກ່ຽວກັບຊົນເຜົ່າ ລະວີ ຄືນໃໝ່ໂດຍແຍກຈາກປື້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າ ລະວີ ໃນ ສປປ ລາວ. ປື້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ລະວີ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ ແລະ ບາງປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ລະວີ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕົ້ນກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແລກ ຍາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ລະວີ ກໍຍັງຕັ້ງ
ພູມລຳເນົາ ແລະ ຖິ່ນຖານບ້ານຊ່ອງ
ຢູ່ແຄມຫ້ວຍລະວີໃນສາມບ້ານເຊັ່ນ:
ບ້ານ ຝັ່ງແດງ, ບ້ານ ລຳພັນ ແລະ ບ້ານ
ລະວີນ້ອຍ ທີ່ຂຶ້ນກັບເມືອງ ລະມ່າມ
ແຂວງ ເຊກອງ ເໜືອນເດີມ.
ມີປະຊາກອນທັງໝົດ
1.193 ຄົນ, ຍິງ
580 ຄົນ ຕາມການ
ສຳຫຼວດພົນລະ
ເມືອງທົ່ວປະເທດ ຄັ້ງທີ 3
ປີ 2005




- ຊົນເຜົ່າ ລະວີ ທີ່ແຈກຢາຍຢູ່ແຕ່ລະບ່ອນ
  - ແຂວງ ເຊກອງ: ເມືອງ ລະມາມ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ສະໄໝກ່ອນສັກດີນາສະຫຍາມໄດ້ເຂົ້າມາຮຸກຮານປະເທດລາວເຮົາ. ຊົນເຜົ່າ ລະວີ ແມ່ນໄດ້ຕັ້ງຫຼັກປັກຖານຢູ່ເມືອງ ດາກຈຶງ ຮ່ວມກັບຊົນເຜົ່າ ຕຣຽງ ແລະ ກໍມີກົກເຄົ້າເຫງົ້າກໍອັນດຽວ ກັນກັບຊົນເຜົ່າ ຕຣຽງ. ພາຍຫຼັງກອງທະຫານສັກດີນາ ສະຫຍາມ ກວາດລ້າງພວກເຂົາເຈົ້າໄປຢູ່ເມືອງ ສະຫຍາມ ຊົ່ວໄລຍະໜຶ່ງແລ້ວກໍຄືນ ມາຕັ້ງຫຼັກປັກຖານຢູ່ປະເທດລາວແຄມຫ້ວຍລະວີ ທີ່ຂຶ້ນກັບເມືອງ ລະມ່າມ ແຂວງເຊກອງ ເປັນເວລາເຫິງນານພໍສົມຄວນ. ຊຶ່ງໃນໄລຍະທີ່ພວກຜູ່ຄົນຢູ່ທ້ອງຖິ່ນທ່ຽວໄປມາກໍເລີຍເອີ້ນພວກຕັ້ງພູມລໍາເນົາລຽບຕາມແຄມຫ້ວຍດັ່ງກ່າວວ່າ: ພວກລະວີ ໃນທີ່ສຸດພວກເຂົາເຈົ້າກໍໄດ້ຂະໜານນາມຕົນເອງວ່າເປັນຊົນເຜົ່າ “ລະວີ” ຈົນເທົ່າທຸກວັນນີ້.



ພາບໂດຍ: ແນວລາວສ້າງຊາດ ແຂວງ ເຊກອງ

ຕາມແຫຼ່ງຂໍ້ມູນໃຫ້ຮູ້ວ່າ: ໃນສະໄໝທີ່ທະຫານສັກດີນາສະຫຍາມກວາດລ້າງຄົນ ຕຣຽງ ຢູ່ເມືອງ ດາກຈຶງ ນັ້ນໄປຢູ່ປະເທດສະຫຍາມ ໄດ້ຖືກການມອບໝາຍໃຫ້ເຝົ້າຮັກສາ ແລະ ຮັບໃຊ້ເຈົ້າຊີວິດແຫ່ງເມືອງ ສະຫຍາມ ສະໄໝນັ້ນ. ໃນເວລານັ້ນວີຂອງເຈົ້າຊີວິດແຫ່ງເມືອງ ສະຫຍາມ ເສຍຫາຍ ຊອກຫາແນວໃດກໍບໍ່ພົບ, ເລີຍຕູ່ຫາວ່າ: ພວກຊາວ ຕຣຽງ ລັກວີຂອງຕົນ ແລະ ສັ່ງໃຫ້ເສນາອາມາດທຸບຕີ, ທໍລະມານພວກເຂົາເຈົ້າຢ່າງຮ້າຍແຮງທີ່ສຸດ. ຊຶ່ງເຮັດໃຫ້ພວກເຂົາເຈົ້າທົນບໍ່ໄດ້ ຈຶ່ງພາກັນລັກໂຕນໜີແລ້ວກໍມາຕັ້ງພູມລໍາເນົາລຽບ ຕາມແຄມນໍ້າ ຫ້ວຍລະວີ ທີ່ຂຶ້ນກັບ ເມືອງລະມ່າມ ແຂວງ ເຊກອງໃນປັດຈຸບັນນີ້.

ສໍາລັບຊື່ເອີ້ນຂອງຊົນເຜົ່ານີ້ມີສອງຄວາມໝາຍຄື: ໜຶ່ງແມ່ນມາຈາກຊື່ຫ້ວຍທີ່ຊົນເຜົ່ານີ້ມາຕັ້ງຖິ່ນຖານບ້ານຊ່ອງຢູ່ ແລະ ສອງແມ່ນມາຈາກຄໍາທີ່ວ່າ: “ລັກວີ” ແຕ່ຊື່ທີ່ເຂົາເຈົ້າມັກ ແລະ ຊື່ທີ່ໃຊ້ໃນທາງລັດຖະການແມ່ນ ຊົນເຜົ່າ “ລະວີ”.

# ອາຊີບຂອງຊົນເຜົ່າ ລະວີ

ການດໍາເນີນຊີວິດທາງດ້ານເສດຖະກິດ, ອາຊີບຕົ້ນຕໍຂອງຊົນເຜົ່າ ລະວີ ແມ່ນຖາງປ່າເຮັດໄຮ່ປູກເຂົ້າຈ້າວ. ນອກນັ້ນຍັງປູກພືດທີ່ມີທາດແປ້ງ, ພືດລົ້ມລຸກ, ພືດຕະກຸນຖົ່ວເປັນສໍາຮອງ. ຊົນເຜົ່ານີ້ມີມູນເຊື້ອໃນວິຊາຫັດຖະກໍາຈັກສານ, ຕີເຫຼັກເພື່ອຜະລິດເຄື່ອງໃຊ້ສອຍໃນຄອບຄົວ, ເຄື່ອງມືການຜະລິດ ແລະ ມີມູນເຊື້ອໃນການລ່າເນື້ອສັດປ່າ, ເກັບເດັດຜັກປ່າ, ຫາປາຕາມທໍາມະຊາດ, ເຮັດກະດົດ, ກະຕໍ່າ ແລະ ລ້ຽງສັດປະເພດຕ່າງໆ ຄື: ຄວາຍ, ໝູ, ໄກ່ ເພື່ອໄວ້ເຮັດຮີດຄອງ ແລະ ເປັນອາຫານກິນປະຈໍາວັນ.

# ທີ່ຕັ້ງບ້ານ ແລະ ເຮືອນ

ຜ່ານຂະບວນວິວັດແຫ່ງການຄົງຕົວ ແລະ ຂະຫຍາຍຕົວເປັນໄລຍະເວລາຫຼາຍສະຕະວັດມານີ້ກໍເຫັນວ່າຊົນເຜົ່າ ລະວີ ບໍ່ໄດ້ມີວັດທະນະທຳທີ່ເປັນເອກະລັກອັນສະເພາະຂອງຊົນເຜົ່າຕົນ. ເນື່ອງມາຈາກໄດ້ຮັບຜົນສະທ້ອນທາງດ້ານວັດທະນະ ທຳຈາກຊົນເຜົ່າໃກ້ຄຽງເຊັ່ນ: ຊົນເຜົ່າ ຮ່າຮັກ ແລະ ຊົນເຜົ່າຕຣຽງ. ໂດຍສະເພາະແມ່ນເຕັກນິກໃນການປຸກສ້າງເຮືອນ, ບໍ່ມີສາລາກວານຄືບ້ານຊົນເຜົ່າ ຕຣຽງ, ແຕ່ພັດມີຫຼັກສຳລັບຜູກຄວາຍທີ່ຂ້າໃນເວລາເຮັດຮີດຄອງ ຫຼື ເວລາລູກສາວຈະແຕ່ງດອງຢູ່ຕໍ່ໜ້າເຮືອນໃຜລາວ.

*ຄັດຈາກປື້ມບັນດາຊົນເຜົ່າໃນ ສປປ ລາວ*





ພາບໂດຍ: ແນວລາວສ້າງຊາດ ແຂວງ ເຊກອງ



ພາບໂດຍ: ແນວລາວສ້າງຊາດ ແຂວງ ເຊກອງ



ພາບໂດຍ: ແນວລາວສ້າງຊາດ ແຂວງ ເຊກອງ

# ເຄື່ອງນຸ່ງຫົ່ມ

ໃນສະພາບສັງຄົມບໍ່ມີວັດທະນະທຳທີ່ເປັນຂອງຕົນເອງຈຶ່ງເຮັດໃຫ້ເຂົາເຈົ້າບໍ່ມີເຄື່ອງນຸ່ງຫົ່ມທີ່ເປັນເອກະລັກຕົນ. ການນຸ່ງຫົ່ມບໍ່ວ່າຊາຍ ຫຼື ຍິງກໍແມ່ນຮຽນແບບ ແລະ ຄ້າຍຄືກັນກັບຊົນເຜົ່າ ຮ່າຣັກ, ຊົນເຜົ່າ ຕຣຽງ. ປັດຈຸບັນຍິ່ງເປັນການສະດວກໃນການຫາຊື້ຕາມທ້ອງຕະຫຼາດຄືກັນກັບຊົນເຜົ່າອື່ນໆ.

# ອາຫານ ແລະ ເຄື່ອງດື່ມ

ຊົນເຜົ່າ ລະວີ ມີຄວາມນິຍົມກິນເຂົ້າໜຽວ, ມັກກິນອາຫານປະເພດ: ລາບດິບ, ປີ້ງ, ຈີ່, ເອາະ ທີ່ມີລົດຊາດເຜັດ ແລະ ເຄັມ, ມັກດື່ມເຫຼົ້າເດັດ, ດື່ມນ້ຳດິບ, ສູບຢາເສັ້ນພັນດ້ວຍໃບຕອງກ້ວຍແຫ້ງ. ປັດຈຸບັນການກິນດື່ມກໍຍັງມີລັກສະນະທີ່ສືບທອດມາແຕ່ບັນພະບູລຸດ ແລະ ມີການປະຍຸກຂຶ້ນເປັນບາງປະເພດອາຫານ ແລະ ເຄື່ອງດື່ມເຊັ່ນ: ດື່ມນ້ຳຕົ້ມ, ດື່ມເບຍ, ສູບຢາທີ່ຜະລິດຈາກໂຮງງານ ແລະ ອື່ນໆ.



ພາບໂດຍ: ກົມຊົນເຜົ່າ

# ຄວາມເຊື່ອຖື

ໃນສັງຄົມຂອງຊົນເຜົ່າ ລະວີ ແມ່ນງ່າຍດາຍນັບແຕ່ສະໄໝກ່ອນຈົນເຖິງປັດຈຸບັນໃນຮອບວຽນປີໜຶ່ງເຂົາເຈົ້າຈະເຮັດພິທີກຳ ຫຼື ຮີດຄອງຄືເຮັດຮີດ "ຈ່ອງກະປຽວ". ໂດຍການຂ້າຄວາຍໃຫ້ຜີທີ່ຕົນນັບຖື ເຊັ່ນ: ຜີຫ້ວຍ, ຮອງ, ໜອງ, ບຶງ ມາກິນກ່ອນ ແລະ ພວກຍາດຕິພີ່ນ້ອງ, ໝູ່ເພື່ອນຈຶ່ງຄ່ອຍກິນຕາມຫຼັງ. ສ່ວນການເຮັດບຸນ ລະປືບນັ້ນແມ່ນພຽງແຕ່ເປັນການເອີ້ນຂວັນຂອງຜູ່ທີ່ລ່ວງລັບໄປແລ້ວໃຫ້ມາຢູ່, ມາກິນ, ມາດື່ມ. ແນໃສ່ໃຫ້ມີການເຄື່ອນໄຫວຄືກັນກັບໃນເວລາຍັງມີຊີວິດ ແລະ ຜູ່ທີ່ຍັງມີຊີວິດຢູ່ໃຫ້ມີຄວາມສຸກທຸກປະການ.

# ສິລະປະວັນນະຄະດີ

ດ້ານສິລະປະວັນນະຄະດີແມ່ນມີບົດຮ້ອງ, ທຳນອງເສບ, ມີກອນຂັບ, ກອນລຳ, ມີນິທານພື້ນເມືອງ, ຄຳຜະຫຍາ, ຄຳສຸພາສິດ ທີ່ມີລັກສະນະສ່ອງແສງເຖິງຄວາມອົດທົນຕໍ່ສູ້ກັບທຳມະຊາດ ແລະ ສັງຄົມທັງແມ່ນການຂັບທີ່ເປັນພາສາຂອງເຂົາເຈົ້າ.

# ພາສາປາກເວົ້າ

ພາສາປາກເວົ້າຂອງຊົນເຜົ່າ ລະວີ ໄດ້ຈັດເຂົ້າໃນໝວດພາສາມອນ-ຂະແມ, ບໍ່ມີຕົວໜັງສືຂຽນ, ມີພາສາປາກເວົ້າຊຶ່ງຄ້າຍຄືພາສາຂອງຊົນເຜົ່າ ຮ່າຣັກ ແລະ ພາສາຂອງຊົນເຜົ່າ ຕຣຽງ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ລະວິ

| ລຳດັບ | ພາສາ ລາວ | ພາສາ ລະວິ |
|---|---|---|
| 01 | ສະບາຍດີ | ສະບາຍເຣາະ |
| 02 | ໂຊກດີ | ປີຫາຣາເຣາະ |
| 03 | ຂອບໃຈ | ຂໍອຳຈາຍ |
| 04 | ຂໍໂທດ | ລາມອມລາວ |
| 05 | ເຈົ້າຊື່ຫຍັງ? | ໄມເຈາະມໍ ? |
| 06 | ເຮັດຫຍັງຢູ່? | ໄມປີມມໍ ? |
| 07 | ກິນເຂົ້າແລ້ວບໍ? | ໄມຈ່ອງແວະ ? |
| 08 | ລາກ່ອນ | ເຈີນອຣ/ເຈີກໂຢະ |
| 09 | ພົບກັນໃໝ່ | ພະນະອຳນາວ |
| 10 | ບໍ່ເປັນຫຍັງ | ຢີພໍ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ແຂວງ ເຊກອງ*